Souphanouvong University Journal of Multidisciplinary Research and Development
2026, Vol. 12, 04F, 106-112
https://doi.org/10.69692/SUJMRD1204F106

People's Attitudes Towards the Implementation of Reducing Rural Poverty and Malnutrition Project in Oudomxay Province

Khamsai OULAYSENG[1*], Dalivanh SIRISACK[2], Dalounny INDAVONG[3]

Organization resources management, Academic Management Office, Souphanouvong University, Lao PDR

[1*]***Correspondence:*** *Department of Finance at Oundomxay Proviince,*
Tel: 020 55112745,
Email: khamsai020@gmail.com,
[2,3]*Administration Office,*
Souphanouvong University,
Tel: 020-91888817,
email: sirisackdalivanh@gmail.com,
Tel: 020-59264777,
Email: indavong@su.edu.la

Article Info:

Submitted: October 15, 2026
Revised: November 05, 2026
Accepted: November 09, 2026

Abstract

The objectives of this research were the people's cognitive toward on the implementation of the reducing rural poverty and malnutrition project and the people's behaviour toward on the implementation of the reducing rural poverty and malnutrition project at Oudomxay province. The population comprised 370 beneficiary households. Data were collected using a questionnaire with a reliability coefficient of 0.963 and data analyzed using frequencies and percentages.

The research findings revealed that: A majority of respondents (86.5%) demonstrate a high level of cognition, scoring betweent 19 to 25 (over 80% correct), By component, cognition ranked highest was a program goals, followed by program implementation, operating model, and finally organisation, responsibility and coordination.

Regarding behaviour, most of beneficiary households joined the program between 2024 to 2026 (79.2%). Attendance was 88.1% for four antenatal care visits, 89.2% for monthly growth monitoring and promotion, 91.1% for child immunisation as scheduled by the health centre, and 90.0% for social and behaviour change communication sessions on nutrition and health. In addition, 33.5% attended five to six rounds of vaccination and drops, and 75.9% participated in other project activities. Forthermore, 98.4% received the LAK 250,000 cash support, 80.3% spent it on food, and 90.0% had never received a warning card for non – compliance with program conditions.

Keywords: *Cognition, people's behaviour toward on implementation, Reducing Rural Poverty and Malnutrition Project*

1. ພາກສະເໜີ

ໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການໃນເຂດຊົນນະບົດ ເປັນໜຶ່ງໃນ 6 ໂຄງການຂອງຍຸດທະສາດໂພຊະນາການແຫ່ງຊາດ ໂດຍໄດ້ຮັບການຈັດຕັ້ງປະຕິບັດໃນ 2 ກະຊວງຄື: ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງການເງິນ ແລະ ໂຄງການຈະໄດ້ຮັບການຈັດຕັ້ງປະຕິບັດໃນ 1,665 ບ້ານ, ໃນ 25 ເມືອງຈາກ 7 ແຂວງ ປະກອບມີ: ແຂວງຜົ້ງສາລີ, ແຂວງຫົວພັນ, ແຂວງອຸດົມໄຊ, ແຂວງຊຽງຂວາງ, ແຂວງສະຫວັນນະເຂດ, ແຂວງສາລະວັນ ແລະ ແຂວງເຊກອງ ເຊິ່ງທັງໝົດເຫຼົ່ານີ້ແມ່ນມີຂັ້ນພາວະຢຸດການຂະຫຍາຍຕົວໃນເດັກນ້ອຍສູງກວ່າຄ່າສະເລ່ຍຂອງປະເທດຢ່າງຫຼວງຫຼາຍ ເຊິ່ງຈຸດປະສົງ ແລະ ເປົ້າໝາຍຂອງໂຄງການແມ່ນເພື່ອສະໜັບສະໜຸນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອທາງດ້ານສັງຄົມ ເພື່ອປັບປຸງພຶດຕິກຳດ້ານໂພຊະນະການ ແລະ ເສີມຂະຫຍາຍແຜນງານໜຶ່ງດຽວທີ່ມີສ່ວນຮ່ວມດ້ານໂພຊະນະການ ຈາກຫຼາຍຂະແໜງການມີສ່ວນຮ່ວມ ແລະ ມີ 5 ອົງປະກອບຄື: (1) ເສີມສ້າງຄວາມເຂັ້ມແຂງແກ່ໜ່ວຍງານຂອງລະບົບປົກປ້ອງທາງສັງຄົມ, (2) ສະໜັບສະໜຸນການຈ່າຍເງິນແບບມີເງື່ອນໄຂ, (3) ການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍງານຈັດຕັ້ງປະຕິບັດໂຄງການ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

(4) ປັບປຸງການຕິດຕາມ ແລະ ການປະສານງານ ຂອງແຜນງານໜຶ່ງດຽວ ທີ່ມີສ່ວນຮ່ວມຫຼາຍຂະແໜງການ (5) ການຕອບໂຕ້ກໍລະນີເກີດເຫດສຸກເສີນ ເພື່ອສ້າງທ່າແຮງອັນພົ້ນເດັ່ນ ເມື່ອປະສານສົມທົບກັນແລ້ວສາມາດ ສົ່ງຜົນກະທົບອັນໃຫຍ່ຫຼວງໃນການຫຼຸດຜ່ອນອັດຕາເດັກເຕ້ຍກວ່າ ມາດຕະຖານໄດ້ (ແມ່ໃສ່ແມ່ຍິງຖືພາ ແລະ ເດັກທີ່ມີອາຍຸຕ່ຳກວ່າ 2 ປີ ຫຼື ເດັກ 1,000 ວັນ ທຳອິດຂອງເດັກ) ແມ່ຍິງຜູ້ໄດ້ຮັບຜົນປະໂຫຍດໃຊ້ ບໍລິການຝາກທ້ອງ, ເດັກນ້ອຍໄດ້ຮັບການຕິດຕາມການຈະເລີນເຕີບໂຕ, ເດັກນ້ອຍໄດ້ຮັບການສັກຢາວັກຊີນຕາມເກນຜົນໄດ້ຮັບແມ່ນການ ປ່ຽນແປງພຶດຕິກຳຄວາມສ່ຽ ນເຄີຍທາງດ້ານສັງຄົມ (Ministry of Agriculture and Forest, 2024). ແຂວງອຸດົມໄຊ ເປັນໜຶ່ງໃນ 8 ແຂວງພາກເໜືອ ທີ່ໄດ້ຮັບໂຄງການແຜນງານໜຶ່ງດຽວທີ່ມີສ່ວນຮ່ວມ ຫຼາຍຂະແໜງການ ໂດຍໃນໄລຍະ 5 ປີ ຜ່ານມາ ເສດຖະກິດຂອງແຂວງ ໄດ້ມີການຂະຫຍາຍຕົວສະເລ່ຍ ໃນລະດັບ 4.64% ແລະ ປະກອບມີ 7 ເມືອງ, ມີ 51 ກຸ່ມບ້ານ ມີ 466 ບ້ານ ແລະ ເຫັນໄດ້ວ່າສະພາບປັດຈຸບັນ ແຂວງອຸດົມໄຊຍັງເປັນແຂວງໜຶ່ງທີ່ມີອັດຕາຂັ້ນທີ່ສູງໃນການຂາດໂພ ສະນາການຊ ຳເຮື້ອໃນເດັກນ້ອຍ. ດ້ວຍເຫດນັ້ນ, ທາງແຂວງຈຶ່ງໄດ້ມີ ການກຳນົດເປົ້າໝາຍທີ່ສຳຄັນໃນການແກ້ໄຂບັນຫາການຂາດໂພສະນາ ການໃຫ້ຫຼຸດລົງ ໂດຍຜ່ານການຈັດຕັ້ງປະຕິບັດແຜນງານໜຶ່ງດຽວທີ່ມີ ສ່ວນຮ່ວມຫຼາຍຂະແໜງການ ດ້ານໂພສະນາການ ຂອງ ສປປ ລາວ ໂດຍເລີ່ມຈັດຕັ້ງປະຕິບັດແຕ່ປີ 2018 ເປັນຕົ້ນມາ ແລະລັດຖະບານໄດ້ ແບ່ງການຈັດຕັ້ງປະຕິບັດແຜນງານດັ່ງກ່າວອອກເປັນ 2 ໄລຍະຂອງການ ດຳເນີນງານ ພາຍໃຕ້ຂອບເຂດການຈັດຕັ້ງປະຕິບັດໂຄງການແຜນງານ ໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການ ເພື່ອປັບປຸງວຽກງານໂພຊະນາ ການ ໃນເຂດຊົນນະບົດ ໃນແຂວງອຸດົມໄຊ ປະກອບມີ 4 ເມືອງເປົ້າໝາຍ ຂອງໂຄງການ ຄື: ເມືອງຫຼາ, ເມືອງນາໝໍ້, ເມືອງງາ, ເມືອງປາກແບງ ແລະ ມີຄອບຄົວທີ່ຢູ່ໃນເກນເປົ້າໝາຍໂຄງການ 50% ລົງມາທັງໝົດມີ 14,481 ຄອບຄົວ. ໃນນີ້, ເປັນຄອບຄົວເປົ້າໝາຍໃນການຕິດຕາມທີ່ຍັງບໍ່ ທັນມີແມ່ຍິງຖືພາ ແລະ ເດັກລຸ່ມ 2 ປີ ທັງໝົດ 8.801 ຄອບຄົວ ແລະ ເປັນຄອບຄົວທີ່ໄດ້ຮັບຜົນປະໂຫຍດແລ້ວທີ່ມີແມ່ຍິງຖືພາ ແລະ ເດັກລຸ່ມ 2 ປີ ທັງໝົດຈຳນວນ 4,401 ຄອບຄົວ ແລະ ມີສະມາຊິກທັງໝົດ 4,724 ຄົນ ເຊັ່ນ: ເປັນເດັກທີ່ມີອາຍຸຕ່ຳກວ່າ 2 ປີ ມີ 3,391 ຄົນ ແລະ ເປັນແມ່ ຖືພາ 1,333 ຄົນ ເມື່ອທຽບໃສ່ 6 ເດືອນຜ່ານມາຄອບຄົວເປົ້າໝາຍ 50% ມີ 8.990 ຄອບຄົວ ຫຼຸດລົງ 189 ຄອບຄົວ ກວມ 2.10% ແລະ ຄອບຄົວ ທີ່ໄດ້ຮັບຜົນປະໂຫຍດແລ້ວ 4,330 ຄອບຄົວ ໂດຍເພີ່ມຂຶ້ນ 71 ຄອບຄົວ ກວມ 1.64% ແລະ ມີສະມາຊິກທັງໝົດ 4,680 ຄົນ ເພີ່ມ 44 ຄົນ ກວມ 0,94% ໃນນັ້ນ ເດັກນ້ອຍ 3,472 ຄົນ ເຊິ່ງຫຼຸດ 81 ຄົນ ກວມ 2.33% ແລະ ແມ່ຖືພາມີ 1,208 ຄົນ ເພີ່ມຂຶ້ນ 125 ຄົນ ກວມ 10.35% (ພະແນກການເງິນແຂວງ ອຸດົມໄຊ, 2025). ສະນັ້ນ, ຈະເຫັນ ວ່າການດຳເນີນງານໂຄງການຍັງມີຄວາມທ້າທາຍຫຼາຍຢ່າງເຊັ່ນ: ຍັງມີ ປະຊາຊົນບາງຈຳນວນ, ບາງເຂດຍັງຖືຮີດຄອງປະເພນີດັ້ງເດີມ, ບໍ່ຄ່ອຍໃຫ້ ຄວາມຮ່ວມມື ແລະ ປະກອບ ສ່ວນເຂົ້າໃນກິດຈະກຳ; ເດັກກຸ່ມເປົ້າໝາຍ ອາຍຸເກີນ 2 ປີບໍ່ມາເຂົ້າຮ່ວມກິດຈະກຳ ແລະ ຮັບການປະເມີນເພາະມີ ການສົມທຽບ, ຊັ່ງຊາກັບຜູ້ໄດ້ຮັບຜົນປະໂຫຍດດ້ານນະໂຍບາຍ ຂອງ ໂຄງການ ລພຊ ແລະ ໄພທຳມະຊາດທີ່ເກີດຂຶ້ນ ໂດຍສະເພາະໄພນ້ ຳ ຖ້ວມ, ແຫ້ງແລ້ງ ສິ່ງຜົນກະທົບຕໍ່ກັບຊີວິດການເປັນຢູ່ຂອງປະຊາຊົນໃນ ການທຳການຜະລິດ, ການປູກ, ການລ້ຽງ, ການສະໜອງບໍ່ພຽງພໍໃນ ບາງຊ່ວງ. ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງລົງທຶນເພື່ອສົ່ງເສີມ ສຸຂະພາບ ແລະ ໂພຊະນາການ ແລະ ມີການຈັດຕັ້ງປະຕິບັດ ເພື່ອລົບ ລ້າງການຂາດສານອາຫານໃນທຸກຮູບແບບ. ສະນັ້ນ, ການຈັດຕັ້ງ ປະຕິບັດວຽກງານໂພຊະນາການທີ່ມີໃນປັດຈຸບັນ ມັນເປັນພຽງແຕ່ຂະແ ໜງສາທາລະນະສຸກຈັດຕັ້ງປະຕິບັດຝ່ານດຽວມັນບໍ່ພຽງພໍ, ເຊິ່ງມັນ ຮຽກຮ້ອງໃຫ້ມີສ່ວນຮ່ວມຂອງຫຼາຍຂະແໜງການໃນການຈັດຕັ້ງ ປະຕິບັດ ໂດຍສະເພາະແມ່ນການເຂົ້າມາມີສ່ວນຮ່ວມຂອງປະຊາຊົນໃນ ດ້ານການຈັດກິດຈະກຳຕ່າງໆ ຂອງໂຄງການຢ່າງຕໍ່ເນື່ອງ ເຊິ່ງຖ້ ຳ ປະຊາຊົນຫາກເຂົ້າມາມີສ່ວນຮ່ວມຫຼາຍຂຶ້ນກໍ່ຈະເຮັດໃຫ້ໂຄງການ ດັ່ງກ່າວນີ້ສາມາດບັນລຸຜົນສຳເລັດໄດ້ໃນລະດັບຄາດໝາຍທີ່ກຳນົດໄວ້. ນອກຈາກນີ້, ໃນໄລຍະຜ່ານມາການສຶກສາທັດສະນະຄະຕິຂອງ ປະຊາຊົນ ຍັງບໍ່ມີຜູ້ສົນໃຈຄົ້ນຄວ້າໃນການປະເມີນໂຄງການ ລພຊ ມາ ກ່ອນ ເພື່ອເບິ່ງວ່າປະຊາຊົນທີ່ເປັນກຸ່ມເປົ້າໝາຍຂອງໂຄງການໄດ້ມີ ທັດສະນະຄະຕິຄືແນວໃດຕໍ່ການດຳເນີນງານຂອງໂຄງການ.

ດ້ວຍເຫດຜົນຂ້າງເທິງທາງຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈທີ່ ຈະສຶກສາເຖິງ ທັດສະນະຄະຕິຂອງປະຊາຊົນຕໍ່ການປະຕິບັດວຽກງານ ຂອງໂຄງການຫຼຸດຜ່ອນຄວາມທຸກຍາກ ຂາດໂພຊະນາການ ເຂດ ຊົນນະບົດ ຢູ່ແຂວງອຸດົມໄຊ ໂດຍມີຈຸດປະສົງສຶກສາຄວາມຮູ້ ຄວາມ ເຂົ້າໃຈຂອງປະຊາຊົນ ທີ່ມີຕໍ່ການປະຕິບັດວຽກງານ ຂອງໂຄງການ ຫຼຸດຜ່ອນຄວາມທຸກຍາກ ຂາດໂພຊະນາການ ເຂດຊົນນະບົດ ຢູ່ແຂວງ ອຸດົມໄຊ ແລະ ສຶກສາພຶດຕິກຳຂອງປະຊາຊົນຕໍ່ການປະຕິບັດວຽກງານ ໂຄງການຫຼຸດຜ່ອນຄວາມທຸກຍາກ ຂາດໂພຊະນາການ ເຂດຊົນນະບົດ ຢູ່ແຂວງອຸດົມໄຊ ເພື່ອສາມາດນຳໃຊ້ຂໍ້ມູນເປັນແນວທາງໃນການແກ້ໄຂ ບັນຫາ ແລະ ສິ່ງເສີມພຶດຕິກຳການເຂົ້າຮ່ວມຂອງປະຊາຊົນຕໍ່ການຈັດຕັ້ງ ປະຕິບັດໂຄງການຫຼາຍຂຶ້ນໃນອານາຄົດ.

2. ອຸປະກອນ ແລະ ວິທີການຄົ້ນຄວ້າ

2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນ ແມ່ນ ປະຊາຊົນທີ່ເປັນແມ່ຍິງຖືພາ ແລະ ແມ່ທີ່ມີ ລູກອາຍຸ ບໍ່ເກີນ 2 ປີ ທີ່ເຂົ້າຮ່ວມໂຄງການ ມີທັງໝົດ 4,330 ຄອບຄົວ ແລະ ໄດ້ກຳນົດຂະໜາດຂອງກຸ່ມຕົວຢ່າງ ຈຳນວນ 370 ຄົນ ຕາມແບບ ຮູ້ປະຊາກອນທີ່ແນ່ນອນ ຕາມແບບຂອງ Yamane (1973) ເຊິ່ງກຳ ນົດຄ່າຄວາມຄາດເຄື່ອນຂອງຂໍ້ມູນເທົ່າ 5%

2.2 ເຄື່ອງມືໃນການເກັບຂໍ້ມູນ

ການຄົ້ນຄວ້າຄັ້ງນີ້ແມ່ນນຳໃຊ້ວິທີການສຶກສາຄົ້ນຄວ້າທາງປະລິມານ ເປັນການໃຊ້ຂໍ້ມູນທາງສະຖິຕິ ເຊິ່ງເຄື່ອງມືທີ່ໃຊ້ເຂົ້າໃນການຄົ້ນຄວ້າແມ່ນນຳໃຊ້ແບບສອບຖາມ ໂດຍມີຂໍ້ຄຳຖາມທີ່ເປັນແບບເລືອກຕອບລາຍການ (Check list) ແລະ ເປັນຄຳຖາມລັກສະນະແບບປາລະໄນມີສອງຄຳຕອບໃຫ້ເລືອກ ຄືແມ່ນ ຫຼື ບໍ່ແມ່ນ (Yes, No Qeastion) ໂດຍມີຄ່າຄວາມສອດຄ່ອງ (IOC) ສູງກວ່າ 0.66 ທຸກຂໍ້ຄຳຖາມ.

2.3 ວິທີການເກັບກຳຂໍ້ມູນ

ຜູ້ຄົ້ນຄວ້າໄດ້ແຈກແບບສອບຖາມໃຫ້ກຸ່ມຕົວຢ່າງທັງໝົດ 370 ສະບັບ ໂດຍເລີ່ມເກັບກຳຂໍ້ມູນ ແຕ່ເດືອນມັງກອນ -ມີຖຸນາ 2026 ເຊິ່ງສາມາດເກັບ ແລະ ລວບລວມຄືນໄດ້ທັງໝົດ 100% ເຊິ່ງໃຊ້ວິທີການສຸ່ມຕົວຢ່າງແບບເຈາະຈົງ (Purposive Sampling) ແລະ ແຈກແບບສອບຖາມໃຫ້ກຸ່ມຕົວຢ່າງແບບສະດວກ ຕາມແບບຂອງ (Cochran, 1963).

2.4 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນແມ່ນນຳໃຊ້ສະຖິຕິພັນລະນາ ເຊິ່ງເປັນການວິເຄາະຊອກຫາຄ່າທາງສະຖິຕິຕ່າງໆ ເຊັ່ນ: ຄ່າຄວາມຖີ່ ແລະ ຄ່າສ່ວນຮ້ອຍ (Siljiru, 2010) ເຊິ່ງເກນທີ່ໃຊ້ເຂົ້າໃນການວິເຄາະຂໍ້ມູນ ແລະ ອະທິບາຍຜົນຄວາມຮູ້ ຄວາມເຂົ້າໃຈແມ່ນໄດ້ໃຊ້ເກນຂອງ Bloom (1975) ດັ່ງນີ້:

ລ/ດ	ເກນຄະແນນ	ເກນຄະແນນ	ຄວາມຮູ້-ຄວາມເຂົ້າໃຈ
1	ຄະແນນນ້ອຍກວ່າ 60%	1-15 ຄະແນນ	ລະດັບຄວາມຮູ້ຕ່ຳ
2	ຄະແນນຢູ່ລະຫວ່າງ 60% -80%	16-20 ຄະແນນ	ລະດັບຄວາມຮູ້ປານກາງ
3	ຄະແນນ 80% ຂຶ້ນໄປ	21-25 ຄະແນນ	ລະດັບຄວາມຮູ້ສູງ

3. ຜົນໄດ້ຮັບ

3.1 ຄວາມຮູ້/ຄວາມເຂົ້າໃຈ ຕໍ່ການປະຕິບັດວຽກງານ ຂອງໂຄງການຫຼຸດຜ່ອນຄວາມທຸກຍາກ ຂາດໂພຊະນາການ ເຂດຊົນນະບົດ ຢູ່ແຂວງອຸດົມໄຊ ເຫັນວ່າ:

ຕາຕະລາງ 1 ສະແດງຄວາມຄວາມຮູ້ ຄວາມເຂົ້າໃຈ ທີ່ມີຕໍ່ການປະຕິບັດວຽກງານ ຂອງໂຄງການໂດຍລວມ

ລຳດັບ	ເນື້ອໃນ	ຄວາມຖີ່ (ຄົນ)	ສ່ວນຮ້ອຍ (%)
1	ລະດັບຄວາມຮູ້ຕ່ຳ ຄະແນນນ້ອຍກວ່າ 60% (0 – 15 ຄະແນນ)	16	4.3
2	ລະດັບຄວາມຮູ້ປານກາງ ຄະແນນຢູ່ລະຫວ່າງ 60 - 70% (16–18 ຄະແນນ)	34	9.2
3	ລະດັບຄວາມຮູ້ສູງ ຄະແນນຫຼາຍກວ່າ 80% (19– 25 ຄະແນນ)	320	86.5
	ລວມ	**370**	**100.0**

ແຫຼ່ງຂໍ້ມູນ: ຜົນການວິເຄາະຂໍ້ມູນຈາກແບບສອບຖາມ, 2026

ໂດຍລວມແລ້ວປະຊາຊົນ ແຂວງອຸດົມໄຊ ສ່ວນຫຼາຍແມ່ນມີຄວາມຮູ້ຄວາມເຂົ້າໃຈສູງໂດຍລວມຕໍ່ການປະຕິບັດວຽກງານ ຂອງໂຄງການ ລພຊ ຢູ່ແຂວງອຸດົມໄຊ ມີຈຳນວນ 320 ຄົນ ເທົ່າກັບ 86.5%, ຮອງລົງມາແມ່ນມີຄວາມຮູ້ ຄວາມເຂົ້າໃຈປານກາງ ມີຈຳນວນ 34 ຄົນ ເທົ່າກັບ 9.2% ແລະ ສຸດທ້າຍແມ່ນມີຄວາມຮູ້ ຄວາມເຂົ້າໃຈຕ່ຳ ມີຈຳນວນ 16 ຄົນ ເທົ່າກັບ 4.3%.

ຕາຕະລາງ 2 ຄວາມຮູ້ ຄວາມເຂົ້າໃຈ ທີ່ມີຕໍ່ດ້ານເປົ້າໝາຍຂອງໂຄງການ ລພຊ

ລຳດັບ	ເນື້ອໃນ	ຄວາມຖີ່ (ຄົນ)	ສ່ວນຮ້ອຍ (%)
1	ລະດັບຄວາມຮູ້ຕ່ຳ ຄະແນນນ້ອຍກວ່າ 60% (0 – 3 ຄະແນນ)	8	2.2
2	ລະດັບຄວາມຮູ້ປານກາງ ຄະແນນຢູ່ລະຫວ່າງ 60 - 70% (4 ຄະແນນ)	26	7.0
3	ລະດັບຄວາມຮູ້ສູງ ຄະແນນຫຼາຍກວ່າ 80% (5 – 6 ຄະແນນ)	336	90.8
	ລວມ	**370**	**100.0**

ແຫຼ່ງຂໍ້ມູນ: ຜົນການວິເຄາະຂໍ້ມູນຈາກແບບສອບຖາມ, 2026.

ຜູ້ທີ່ມີຄວາມຮູ້ຄວາມເຂົ້າໃຈສູງ ມີຈຳນວນ 336 ຄົນ ເທົ່າກັບ 90.8%, ຮອງລົງມາແມ່ນມີຄວາມຮູ້ ຄວາມເຂົ້າໃຈປານກາງ ມີຈຳນວນ 26 ຄົນ ເທົ່າກັບ 7% ແລະ ສຸດທ້າຍແມ່ນມີຄວາມຮູ້ ຄວາມເຂົ້າໃຈຕ່ຳ ມີຈຳນວນ 8 ຄົນ ເທົ່າກັບ 2.2%.

ຕາຕະລາງ 3 ຄວາມຄວາມຮູ້ ຄວາມເຂົ້າໃຈ ທີ່ມີຕໍ່ຕາມດ້ານການຈັດຕັ້ງ, ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ແລະ ການປະສານງານ

ລຳດັບ	ເນື້ອໃນ	ຄວາມຖີ່ (ຄົນ)	ສ່ວນຮ້ອຍ (%)
1	ລະດັບຄວາມຮູ້ຕ່ຳ ຄະແນນນ້ອຍກວ່າ 60% (0 – 2 ຄະແນນ)	41	11.1
2	ລະດັບຄວາມຮູ້ປານກາງ ຄະແນນຢູ່ລະຫວ່າງ 60 - 70% (3 ຄະແນນ)	305	82.4
3	ລະດັບຄວາມຮູ້ສູງ ຄະແນນຫຼາຍກວ່າ 80% (4 ຄະແນນ)	24	6.5
	ລວມ	**370**	**100.0**

ແຫຼ່ງຂໍ້ມູນ: ຜົນການວິເຄາະຂໍ້ມູນຈາກແບບສອບຖາມ, 2026.

ຜູ້ທີ່ມີຄວາມຮູ້ຄວາມເຂົ້າໃຈປານກາງ ມີຈຳນວນ 305 ຄົນ ເທົ່າກັບ 82.4%, ຮອງລົງມາແມ່ນມີຄວາມຮູ້ ຄວາມເຂົ້າໃຈຕ່ຳ ມີຈຳນວນ 41 ຄົນ ເທົ່າກັບ 11.1% ແລະ ສຸດທ້າຍແມ່ນມີຄວາມຮູ້ ຄວາມເຂົ້າໃຈສູງ ມີຈຳນວນ 24 ຄົນ ເທົ່າກັບ 6.5%.

ຕາຕະລາງ 4 ຄວາມຄວາມຮູ້ ຄວາມເຂົ້າໃຈ ທີ່ມີຕໍ່ດ້ານກິດຈະກຳຂອງໂຄງການ ລພຊ

ລຳດັບ	ເນື້ອໃນ	ຄວາມຖີ່ (ຄົນ)	ສ່ວນຮ້ອຍ (%)
1	ລະດັບຄວາມຮູ້ຕ່ຳ ຄະແນນນ້ອຍກວ່າ 60% (0 – 3 ຄະແນນ)	15	4.1
2	ລະດັບຄວາມຮູ້ປານກາງ ຄະແນນຢູ່ລະຫວ່າງ 60 - 70% (4 ຄະແນນ)	32	8.6
3	ລະດັບຄວາມຮູ້ສູງ ຄະແນນຫຼາຍກວ່າ 80% (5 – 6 ຄະແນນ)	323	87.3
	ລວມ	**370**	**100.0**

ແຫຼ່ງຂໍ້ມູນ: ຜົນການວິເຄາະຂໍ້ມູນຈາກແບບສອບຖາມ, 2026.

ຜູ້ທີ່ມີຄວາມຮູ້ຄວາມເຂົ້າໃຈໃນລະດັບສູງ ມີຈຳນວນ 323 ຄົນ ເທົ່າກັບ 87.3%, ຮອງລົງມາແມ່ນມີຄວາມຮູ້ ຄວາມເຂົ້າໃຈປານກາງ ມີຈຳນວນ 32 ຄົນ ເທົ່າກັບ 8.6% ແລະ ສຸດທ້າຍແມ່ນມີຄວາມຮູ້ ຄວາມເຂົ້າໃຈຕ່ຳ ມີຈຳນວນ 15 ຄົນ ເທົ່າກັບ 4.1%.

ຕາຕະລາງ 5 ຄວາມຄວາມຮູ້ ຄວາມເຂົ້າໃຈ ທີ່ມີຕໍ່ການປະຕິບັດວຽກງານ ຂອງໂຄງການ ລພຊ ຕາມດ້ານຮູບການດຳເນີນງານຂອງໂຄງການ ລພຊ

ລຳດັບ	ເນື້ອໃນ	ຄວາມຖີ່ (ຄົນ)	ສ່ວນຮ້ອຍ (%)
1	ລະດັບຄວາມຮູ້ຕ່ຳ ຄະແນນນ້ອຍກວ່າ 60% (0 – 5 ຄະແນນ)	49	13.2
2	ລະດັບຄວາມຮູ້ປານກາງ ຄະແນນຢູ່ລະຫວ່າງ 60 - 70% (6 ຄະແນນ)	64	17.3
3	ລະດັບຄວາມຮູ້ສູງ ຄະແນນຫຼາຍກວ່າ 80% (7– 9 ຄະແນນ)	257	69.5
	ລວມ	**370**	**100.0**

ແຫຼ່ງຂໍ້ມູນ: ຜົນການວິເຄາະຂໍ້ມູນຈາກແບບສອບຖາມ, 2026.

ຜູ້ທີ່ມີຄວາມຮູ້ຄວາມເຂົ້າໃຈໃນລະດັບສູງ ຕໍ່ດ້ານຮູບການດຳເນີນງານ ຂອງໂຄງການ ລພຊ ຢູ່ແຂວງອຸດົມໄຊ ມີຈຳນວນ 257 ຄົນ ເທົ່າກັບ 69.5%, ຮອງລົງມາແມ່ນມີຄວາມຮູ້ ຄວາມເຂົ້າໃຈປານກາງ ມີຈຳນວນ 64 ຄົນ ເທົ່າກັບ 17.3% ແລະ ສຸດທ້າຍແມ່ນມີຄວາມຮູ້ ຄວາມເຂົ້າໃຈຕ່ຳ ມີຈຳນວນ 49 ຄົນ ເທົ່າກັບ 13.2%.

3.2 ພຶດຕິກຳຂອງແມ່ຍິງຖືພາ ແລະ ແມ່ທີ່ມີລູກອາຍຸ ບໍ່ເກີນ 2 ປີ ທີ່ເຂົ້າຮ່ວມກິດຈະກຳໃນໂຄງການຫຼຸດຜ່ອນຄວາມທຸກຍາກ ຂາດໂພຊະນາການ ເຂດຊົນນະບົດ ຢູ່ແຂວງອຸດົມໄຊ ເຫັນວ່າ:

(1) ສ່ວນຫຼາຍແມ່ນໄດ້ເຂົ້າຮ່ວມໂຄງການເລີ່ມປີ 2024-2026 ມີຈຳນວນ 293 ຄອບຄົວ ກວມເອົາ 79.2%, ຮອງລົງມາແມ່ນໄດ້ເຂົ້າຮ່ວມໂຄງການເລີ່ມປີ 2018-2020 ມີຈຳນວນ 41 ຄອບຄົວ ກວມເອົາ 11.1% ແລະ ຖ້ດມາແມ່ນໄດ້ເຂົ້າຮ່ວມໂຄງການເລີ່ມປີ 2021-2023 ມີຈຳນວນ 36 ຄອບຄົວ ກວມເອົາ 9.7%. (2) ການເຂົ້າຮ່ວມກວດສຸຂະພາບທ້ອງ 4 ຄັ້ງ ມີຈຳນວນ 326 ຄົນ ກວມເອົາ 88.1%, ຮອງລົງມາແມ່ນເຂົ້າຮ່ວມກວດສຸຂະພາບທ້ອງ 3 ຄັ້ງ ມີຈຳນວນ 24 ຄົນ ກວມເອົາ 6.5%, ຖ້ດມາແມ່ນເຂົ້າຮ່ວມກວດສຸຂະພາບທ້ອງ 1 ຄັ້ງ ມີຈຳນວນ 12 ຄົນ ກວມເອົາ 3.2% ແລະ ເຂົ້າຮ່ວມກວດສຸຂະພາບທ້ອງ 2 ຄັ້ງ ມີ 8 ຄອບຄົວ ກວມເອົາ 2.2%. (3) ພຶດຕິກຳການເຂົ້າຮ່ວມສັກຢາວັກຊີນ-ຢອດຢາ 5-6 ຄັ້ງ ມີຈຳນວນ 124 ຄົນ ກວມເອົາ 33.5%, ຮອງລົງມາແມ່ນເຂົ້າຮ່ວມສັກຢາວັກຊີນ-ຢອດຢາ 3-4 ຄັ້ງ ມີຈຳນວນ 57 ຄົນ ກວມເອົາ 15.4%, ຖ້ດມາແມ່ນບໍ່ເຄີຍເຂົ້າຮ່ວມສັກຢາວັກຊີນ-ຢອດຢາ ມີຈຳນວນ 24 ຄົນ ກວມເອົາ 6.5% ແລະ ເຂົ້າຮ່ວມສັກຢາວັກຊີນ-ຢອດຢາ 1-2 ຄັ້ງ ມີ 22 ຄົນ ກວມເອົາ 5.9%. (4) ມີການເຂົ້າຮ່ວມເປັນປົກກະຕິໃນການນຳພາລູກຂອງທ່ານເຂົ້າຮ່ວມການຕິດຕາມເພື່ອກວດກາການຂະຫຍາຍຕົວ ແລະ ສິ່ງເສີມລາຍເດືອນ ມີຈຳນວນ 330 ຄົນ ກວມເອົາ 89.2%, ຮອງລົງມາແມ່ນເຂົ້າຮ່ວມເປັນບາງຄັ້ງ ມີຈຳນວນ 28 ຄົນ ກວມເອົາ 7.6% ແລະ ບໍ່ໄດ້ເຂົ້າຮ່ວມ ມີ 12 ຄົນ ກວມເອົາ 3.2%. (5) ການນຳພາລູກນ້ອຍຂອງທ່ານເຂົ້າຮັບການສັກຢາວັກຊີນທີ່ເໝາະສົມກັບອາຍຸຕາມແນວທາງຂັ້ນຊາດທີ່ຈຸດເບິ່ງແຍງ ສ່ວນຫຼາຍແມ່ນມີການນຳພາລູກນ້ອຍຂອງຕົນໄປສັກຢາເປັນປົກກະຕິຕາມການນັດໝາຍ ຂອງສຸກສາລາ ມີຈຳນວນ 337 ຄົນ ກວມ

ເອົາ 91.1%, ຮອງລົງມາແມ່ນບໍ່ໄດ້ນຳພາລູກເຂົ້າຮ່ວມສັກຢາວັກຊີນເລີຍ ມີຈຳນວນ 23 ຄົນ ກວມເອົາ 6.2% ແລະ ເຂົ້າຮ່ວມບໍ່ເປັນປົກກະຕິ (ເຂົ້າຮ່ວມບາງຄັ້ງ) ມີຈຳນວນ 10 ຄົນ ກວມເອົາ 2.7%. (6) ການເຂົ້າຮ່ວມປົກກະຕິຕໍ່ກິດຈະກຳການສື່ສານເພື່ອປ່ຽນແປງພຶດຕິກຳ ແລະ ສັງຄົມດ້ານໂພຊະນາການດ້ານສຸຂະພາບ ແລະ ໂພຊະນາການຕໍ່ເດືອນ ມີຈຳນວນ 333 ຄົນ ກວມເອົາ 90.0%, ຮອງລົງມາແມ່ນ ເຂົ້າຮ່ວມກິດຈະກຳເປັນບາງຄັ້ງ ມີຈຳນວນ 29 ຄົນ ກວມເອົາ 7.8% ແລະ ບໍ່ໄດ້ເຂົ້າຮ່ວມກິດຈະກຳເລີຍ ມີຈຳນວນ 8 ຄົນ ກວມເອົາ 2.2%. (7) ດ້ານກິດຈະກຳການບັນລະຍາຍ ຫຼື ກິດຈະກຳຂອງໂຄງການ (SBCC) ອື່ນໆ ແມ່ນມີການເຂົ້າຮ່ວມກິດຈະກຳເປັນປົກກະຕິ ມີຈຳນວນ 281 ຄົນ ກວມເອົາ 75.9% ແລະ ບໍ່ໄດ້ເຂົ້າຮ່ວມກິດຈະກຳໂຄງການອື່ນເລີຍ ມີຈຳນວນ 89 ຄົນ ກວມເອົາ 24.1%., (8) ການນຳໃຊ້ເງິນທີ່ໄດ້ຮັບຈາກໂຄງການສ່ວນຫຼາຍແມ່ນໄດ້ຮັບເງິນຊ່ວຍເຫຼືອ 250,000 ກີບ ມີຈຳນວນ 364 ຄົນ ກວມເອົາ 98.4% ແລະ ແລະ ໄດ້ຮັບເງິນຊ່ວຍເຫຼືອ 200,000 ກີບ ມີຈຳນວນ 6 ຄົນ ກວມເອົາ 1.6% ເຊິ່ງສ່ວນຫຼາຍແມ່ນໃຊ້ຈ່າຍເຂົ້າໃນການຊື້ອາຫານ ມີຈຳນວນ 297 ຄົນ ກວມເອົາ 80.3%, ຮອງລົງມາແມ່ນໃຊ້ຈ່າຍເພື່ອເບິ່ງແຍງສຸຂະພາບ ມີຈຳນວນ 62 ຄົນ ກວມເອົາ 16.8% ແລະ ໃຊ້ຈ່າຍອື່ນໆ ມີຈຳນວນ 11 ຄົນ ກວມເອົາ 3.0%. (9) ການປະຕິບັດຕໍ່ໂຄງການແມ່ນເປັນຜູ້ທີ່ບໍ່ເຄີຍໄດ້ຮັບບັດການເຈ້ງເຕືອນ ມີຈຳນວນ 333 ຄົນ ກວມເອົາ 90.0%, ຮອງລົງມາແມ່ນໄດ້ຮັບບັດສີເຫຼືອງ ມີຈຳນວນ 34 ຄົນ ກວມເອົາ 9.2%, ໄດ້ຮັບບັດສີສົ້ມ ຈຳນວນ 2 ຄົນ ກວມເອົາ 0.5% ແລະ ໄດ້ຮັບບັດແດງ ມີຈຳນວນ 1 ຄົນ ກວມເອົາ 0.3%.

4. ວິພາກຜົນ

ຈາກຜົນການສຶກສາໃນຫົວຂໍ້ ທັດສະນະຄະຕິຂອງປະຊາຊົນຕໍ່ການປະຕິບັດວຽກງານຂອງໂຄງການຫຼຸດຜ່ອນຄວາມທຸກຍາກ ຂາດໂພຊະນາການ ເຂດຊົນນະບົດ ຢູ່ແຂວງອຸດົມໄຊ ເຊິ່ງມີຫຼາຍຈຸດທີ່ສາມາດອະທິບາຍ ແລະ ວິພາກຜົນກັບຜົນງານການວິໄຈທີ່ກ່ຽວຂ້ອງ ແລະ ທັດສະດີໄດ້ບາງຈຸດດັ່ງນີ້:

ຄວາມຮູ້ ຄວາມເຂົ້າໃຈຂອງປະຊາຊົນທີ່ມີຕໍ່ການປະຕິບັດວຽກງານໂດຍລວມ ຂອງໂຄງການຫຼຸດຜ່ອນຄວາມທຸກຍາກ ຂາດໂພຊະນາການ ເຂດຊົນນະບົດ ຢູ່ແຂວງອຸດົມໄຊ ພົບວ່າ: ໂດຍລວມແລ້ວ ປະຊາຊົນແມ່ນມີຄວາມຮູ້ຄວາມເຂົ້າໃຈໃນລະດັບສູງ ເຊິ່ງ ສອດຄ່ອງກັບ Chanthamaly (2024) ຜົນການສຶກສາພົບວ່າ: ຄວາມຮູ້ ຄວາມເຂົ້າຂອງປະຊາຊົນຊາວເມືອງນານທີ່ມີຕໍ່ການດຳເນີນງານຂອງໂຄງການຊກຂ ພົບວ່າປະຊາຊົນມີຄວາມຮູ້ ຄວາມເຂົ້າໃຈໃນລະດັບຫຼາຍ ແລະ ສອດຄ່ອງກັບ Chandiphit and Koundavong (2013) ທີ່ຊີ້ໃຫ້ເຫັນວ່າດ້ານຄວາມຮູ້, ຄວາມເຂົ້າໃຈຂອງປະຊາຊົນຊາວເມືອງສະຖານແຂວງໄຊຍະບູລີແມ່ນມີຄວາມຮູ້, ຄວາມເຂົ້າໃຈຕໍ່ການຊ່ວຍເຫຼືອຂອງໂຄງການ Care, ກອງທຶນໝຸນວຽນສັດລ້ຽງ (ແບ້) ໂດຍລວມແລ້ວຢູ່ໃນລະດັບຫຼາຍທີ່ສຸດ (80,43%), ໂດຍຫົວຂໍ້ທີ່ຕອບໄດ້ຖືກຕ້ອງຫຼາຍທີ່ສຸດແມ່ນ: ໂຄງການກອງທຶນໝຸນວຽນສັດລ້ຽງ (ແບ້) ແມ່ນໂຄງການທີ່ໄດ້ຮັບການສະໜັບສະໜຸນທາງດ້ານທຶນ ຈາກອົງການຮ່ວມມືການພັດທະນາຂອງລັດຖະບານປະເທດສະວິດເຊີແລນ (SDC) ເຊິ່ງຕອບຄຳຖາມໄດ້ຖືກຕ້ອງ 92.9%. ແລະ Khonkla (2020) ທີ່ພົບວ່າ: ກຸ່ມຕົວຢ່າງມີການຮັບຮູ້ຂ່າວສານກ່ຽວກັບໂຄງການຮອຍຍິ້ມເພື່ອເຮົາຂອງເທເວດປະກັນໄພໃນລະດັບຫຼາຍ ໂດຍປະເດັນທີ່ຮັບຮູ້ຫຼາຍທີ່ສຸດແມ່ນ ການດຳເນີນກິດຈະກຳເປັນການຊ່ວຍສ້າງໂອກາດໃຫ້ກັບບຸກຄົນທີ່ມີຄວາມຕ້ອງການພິເສດ ແລະ ເດັກຫ້ອງຮຽນພິເສດບາງສ່ວນສາມາດຍ້າຍເຂົ້າໄປຮຽນຮ່ວມກັບເດັກໃນຫ້ອງຮຽນປົກກະຕິໄດ້ ຕາມລຳດັບ. ເມື່ອພິຈາລະນາດ້ານຍ່ອຍພົບວ່າ: ດ້ານເປົ້າໝາຍໃນການປະຕິບັດວຽກງານ, ດ້ານກິດຈະກຳ ແລະ ດ້ານຮູບການດຳເນີນງານ ຂອງໂຄງການຫຼຸດຜ່ອນຄວາມທຸກຍາກ ຂາດໂພຊະນາການ ເຂດຊົນນະບົດ ຢູ່ແຂວງອຸດົມໄຊ ແມ່ນປະຊາຊົນມີຄວາມຮູ້ຄວາມເຂົ້າໃຈສູງ ມີຄວາມສອດຄ່ອງກັບ Boontan (2024) ເຊິ່ງພົບວ່າ: ລະດັບຄວາມຮູ້ ຄວາມເຂົ້ໃຈຂອງປະຊາຊົນໃນຂະບວນການແຜນພັດທະນາທ້ອງຖິ່ນ ໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງໃນນີ້ລຳດັບທຳອິດແມ່ນດ້ານຄວາມໝາຍຂອງແຜນພັດທະນາທ້ອງຖິ່ນມີຄ່າສະເລ່ຍສູງສຸດ, ຮອງລົງມາແມ່ນດ້ານວັດຖຸປະສົງຂອງແຜນພັດທະນາທ້ອງຖິ່ນ ແລະ ດ້ານຂັ້ນຕອນແຜນພັດທະນາທ້ອງຖິ່ນ ແລະ ສຳລັບດ້ານການຈັດຕັ້ງ, ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ແລະ ການປະສານງານ ພົບວ່າປະຊາຊົນ ມີຄວາມຮູ້ຄວາມເຂົ້າໃຈປານກາງ ເຊິ່ງໝາຍຄວາມວ່າປະຊາຊົນຍັງບໍ່ທັນເຂົ້າໃຈດີຕໍ່ກັບພາກສ່ວນ ຫຼື ໜ່ວຍງານທີ່ຮັບຜິດຊອບວຽກງານຂອງໂຄງການ ລພຊ ແລະ ຍັງບໍ່ທັນເຂົ້າໃຈຕໍ່ພາລະໜ້າທີ່ຮັບຜິດຊອບໜ່ວຍງານແຕ່ລະໜ່ວຍງານໄດ້ດີພໍ ເຊິ່ງສອດຄ່ອງກັບ Xayyati et al. (2026) ຜູ້ປະກອບການໃນເມືອງໄຊ ແຂວງອຸດົມໄຊ ໂດຍລວມມີຄວາມຮູ້ຄວາມເຂົ້າໃຈການໃຊ້ບໍລິການແຈ້ງມອບພັນທະອາກອນຜ່ານລະບົບ TaxRIS ໄດ້ຄະແນນສະເລ່ຍ 14.15 ຄະແນນ ຈາກຄະແນນເຕັມ 20 ຄະແນນ ເຊິ່ງມີຄວາມຮູ້ຄວາມເຂົ້າໃຈການໃຊ້ບໍລິການແຈ້ງມອບພັນທະອາກອນຜ່ານລະບົບ TaxRIS ຢູ່ລະດັບປານກາງ ຈຳນວນ 139 ຄົນ ກວມເອົາ 77.22%, ຮອງລົງມີ ຄວາມຮູ້ຄວາມເຂົ້າໃຈ ຢູ່ລະດັບສູງ 23 ຄົນ ກວມເອົາ 12.78% ແລະ ມີຄວາມຮູ້ຄວາມເຂົ້າໃຈຢູ່ລະດັບຕ່ຳ ຈຳນວນ 18 ຄົນ ກວມເອົາ 10%.

ພຶດຕິກຳຂອງປະຊາຊົນຕໍ່ການປະຕິບັດງານຂອງໂຄງການຫຼຸດຜ່ອນຄວາມທຸກຍາກ ຂາດໂພຊະນາການ ເຂດຊົນນະບົດ ຢູ່ແຂວງອຸດົມໄຊ ພົບວ່າ: ປະຊາຊົນໄດ້ເຂົ້າຮ່ວມໂຄງການເລີ່ມປີ 2024-2026, ເຂົ້າຮ່ວມກວດສຸຂະພາບທ້ອງ 4 ຄັ້ງ, ເຂົ້າຮ່ວມສັກຢາວັກຊີນ-ຢອດຢາ 5-6 ຄັ້ງ, ເຂົ້າຮ່ວມເປັນປົກກະຕິໃນການຕິດຕາມເພື່ອກວດກາການຂະຫຍາຍຕົວ ແລະ ສິ່ງເສີມລາຍເດືອນ, ນຳພາລູກເຂົ້າຮ່ວມສັກຢາວັກຊີນເປັນປົກກະຕິຕາມການນັດໝາຍຂອງສຸກສາລາ, ເຂົ້າຮ່ວມເປັນປົກກະຕິຕໍ່ກິດຈະກຳການສື່ສານເພື່ອປ່ຽນແປງພຶດຕິກຳ ແລະ ສັງຄົມດ້ານໂພຊະນາການດ້ານສຸຂະພາບ ແລະ ເຂົ້າຮ່ວມກິດຈະກຳໂຄງການອື່ນ ເຊິ່ງສອດຄ່ອງກັບ Sayphouwan (2024) ເຊິ່ງຄົ້ນພົບວ່າ: ປະຊາຊົນເມືອງໄຊ ແຂວງອຸດົມໄຊ ສ່ວນຫຼາຍມີຄວາມຮູ້ຄວາມເຂົ້າໃຈສູງ ເຊິ່ງສາມາດຕອບຄຳຖາມໄດ້ຖືກຕ້ອງສູງກວ່າໝູ່ແມ່ນ: ດ້ານການຈັດຕັ້ງການດຳເນີນງານຂອງກອງທຶນ, ຮອງລົງມາແມ່ນດ້ານເປົ້າໝາຍການດຳເນີນງານຂອງກອງທຶນ ແລະ ດ້ານຮູບການໃຫ້ການຊ່ວຍເຫຼືອຂອງກອງທຶນ ແລະ ສອດຄ່ອງກັບ Chanthamaly (2024) ພົບວ່າ: ສ່ວນຫຼາຍປະຊາຊົນແມ່ນໄດ້ຮັບການຊ່ວຍເຫຼືອມາແລ້ວ 1 ປີ, ໄດ້ຮັບການຊ່ວຍເຫຼືອເປັນເງິນທຶນໃນການປູກໝາກຖົ່ວດິນ, ເມື່ອປຽບທຽບຫຼັງການ

ໄດ້ຮັບການຊ່ວຍເຫຼືອຂອງໂຄງການ ຊກຂ ແລ້ວປະຊາຊົນແມ່ນມີລາຍຮັບເພີ່ມຂຶ້ນ, ການຊ່ວຍເຫຼືອຂອງໂຄງການມີສ່ວນຍົກລະດັບຄຸນນະພາບໃນການດຳລົງຊີວິດໃຫ້ດີຂຶ້ນຫຼາຍ ແລະ ການຊ່ວຍເຫຼືອຈາກໂຄງການມີສ່ວນເຮັດໃຫ້ບັນຫາທີ່ມີພາຍໃນຄອບຄົວຫຼຸດລົງ, ມີຄວາມຮູ້ສຶກຄວາມພໍໃຈໂດຍລວມໃນລະດັບຫຼາຍຕໍ່ກັບການໃຫ້ການຊ່ວຍເຫຼືອຂອງໂຄງການ ຊກຂ, ພາຍຫຼັງການໄດ້ຮັບການຊ່ວຍເຫຼືອຈາກໂຄງການ ຊກຂ ແລ້ວແມ່ນເປັນຜູ້ທີ່ມີຄວາມຮູ້ ຄວາມສາມາດໃນການສ້າງອາຊີບເພີ່ມສູງຂຶ້ນ ແລະ ມີຄວາມສາມາດສູງຂຶ້ນໃນການສະແດງຄວາມຄິດເຫັນຕໍ່ບຸກຄົນອື່ນ ຫຼື ອົງການຈັດຕັ້ງໃດໜຶ່ງ. ນອກຈາກນີ້, ຍັງສອດຄ່ອງກັບ Paisanjit (2018) ເຊິ່ງພົບວ່າ: ປະຊາຊົນມີສ່ວນຮ່ວມໃນການສະແດງຄວາມຄິດເຫັນສະເໜີບັນຫາຄົ້ນຫາຄວາມຕ້ອງການຂອງຊຸມຊົນ ຕະຫຼອດເຖິງສະເໜີໂຄງການກິດຈະກຳຂອງຊຸມຊົນ ແລະ ຮ່ວມກັນສະເໜີບັນຫາ ແລະ ແນວທາງແກ້ໄຂຜ່ານການດຳເນີນໂຄງການຕາມແຜນການຈັດເວທີ 4 ຄັ້ງ, ດ້ານການດຳເນີນງານພົບວ່າ ປະຊາຊົນສ່ວນໃຫຍ່ໄດ້ເຂົ້າຮ່ວມກິດຈະກຳການຂັບເຄື່ອນການພັດທະນາປະເທດຕາມໂຄງການໄທນິຍົມຍືນຍົງຄົບຖ້ວນຕາມແຜນການດຳເນີນງານທີ່ກຳນົດມີພຽງບາງສ່ວນເທົ່ານັ້ນທີ່ເຂົ້າຮ່ວມໂຄງການບໍ່ຄົບຖ້ວນຕາມກຳນົດ ໃນນີ້ການດຳເນີນງານຈະປະຕິບັດຕາມແຜນງານ ແລະ ບົດບາດໜ້າທີ່ຂອງແຕ່ລະຄົນທີ່ໄດ້ຮັບມອບໝາຍ. ດ້ານການຮັບຜົນປະໂຫຍດພົບວ່າ: ປະຊາຊົນສ່ວນໃຫຍ່ໄດ້ຮັບປະໂຫຍດຈາກໂຄງການສາມາດຕໍ່ຍອດຜັດທະນາໃຫ້ເກີດຄວາມຍືນຍົງ ແລະ ສິ່ງຜົນຕໍ່ໃຫ້ເກີດປະໂຫຍດເພີ່ມຫຼາຍຂຶ້ນ ແລະ ສອດຄ່ອງກັບ Suriya (2023) ພົບວ່າ ການມີສ່ວນຮ່ວມຂອງຊຸມຊົນໃນຂະບວນການເພື່ອສົ່ງເສີມລະບົບສຸຂະພາບຈິດຂອງຊຸມຊົນໄດ້ແກ່: ສຳຫຼວດຂໍ້ມູນ, ແຈ້ງຂໍ້ມູນຂ່າວສານ, ຕັດສິນໃຈເຂົ້າຮ່ວມກິດຈະກຳ ແລະ ສະຫຼຸບຜົນຮ່ວມກັນຢ່າງຕໍ່ເນື່ອງໃນດ້ານສຸຂະພາບຈິດ. ໃນນີ້ຍັງໂຕ້ແຍ້ງກັບ Limpimpronh (2016) ພົບວ່າ ພຶດຕິກຳການມີສ່ວນຮ່ວມໃນໂຄງການປູກປ່າ ໂດຍລວມແລ້ວກຸ່ມຕົວຢ່າງມີພຶດຕິກຳການມີສ່ວນຮ່ວມໃນລະດັບໜ້ອຍທີ່ສຸດ ແລະ ພຶດຕິກຳການມີສ່ວນຮ່ວມໃນໂຄງການວິຖີຊີວິດເພື່ອການພັດທະນາແບບຍືນຍົງ ແລະ ໂຄງການແວ່ນແກ້ວໂດຍລວມແລ້ວກຸ່ມຕົວຢ່າງມີພຶດຕິກຳການມີສ່ວນຮ່ວມໃນລະດັບໜ້ອຍ.

5. ສະຫຼຸບ

ຄວາມຮູ້ ຄວາມເຂົ້າໃຈຂອງປະຊາຊົນທີ່ມີຕໍ່ການປະຕິບັດວຽກງານ ຂອງໂຄງການຫຼຸດຜ່ອນຄວາມທຸກຍາກ ຂາດໂພຊະນາການ ເຂດຊົນນະບົດ ຢູ່ແຂວງອຸດົມໄຊ ສ່ວນຫຼາຍແມ່ນມີຄວາມຮູ້ຄວາມເຂົ້າໃຈໃນລະດັບສູງ ໂດຍສາມາດຕອບຄຳຖາມໄດ້ຖືກຕ້ອງຫຼາຍກວ່າ 80% ໄດ້ຄະແນນ 19-25 ຄະແນນ ມີ 86.5 ສ່ວນຮ້ອຍ, ເຊິ່ງລຳດັບທຳອິດໄດ້ແກ່: ຄວາມຮູ້ຄວາມເຂົ້າໃຈຕໍ່ເປົ້າໝາຍຂອງໂຄງການ, ຕໍ່ມາແມ່ນຄວາມຮູ້ຄວາມເຂົ້າໃຈຕໍ່ການປະຕິບັດງານຂອງໂຄງການ, ຖັດມາແມ່ນຄວາມຮູ້ຄວາມເຂົ້າໃຈຕໍ່ຮູບແບບການດຳເນີນງານຂອງໂຄງການ ແລະ ສຸດທ້າຍແມ່ນດ້ານການຈັດຕັ້ງ, ຄວາມຮັບຜິດຊອບຈັດຕັ້ງປະຕິບັດ ແລະ ການປະສານງານ ແມ່ນປະຊາຊົນຍັງມີຄວາມຮູ້ຄວາມເຂົ້າໃຈໃນລະດັບປານກາງ.

ພຶດຕິກຳຂອງປະຊາຊົນທີ່ມີຕໍ່ການປະຕິບັດງານຂອງໂຄງການຫຼຸດຜ່ອນຄວາມທຸກຍາກ ຂາດໂພຊະນາການ ເຂດຊົນນະບົດ ຢູ່ແຂວງອຸດົມໄຊ ພົບວ່າ: ສ່ວນຫຼາຍແມ່ນໄດ້ເຂົ້າຮ່ວມໂຄງການເລີ່ມປີ 2024-2026 (79.2%), ເຂົ້າຮ່ວມກອດສຸຂະພາບທ້ອງ 4 ຄັ້ງ 88.1%, ເຂົ້າຮ່ວມສັກຢາວັກຊີນ-ຢອດຢາ 5-6 ຄັ້ງ 33.5%, ເຂົ້າຮ່ວມເປັນປົກກະຕິໃນການຕິດຕາມເພື່ອກວດການການຂະຫຍາຍຕົວ ແລະ ສິ່ງເສີມລາຍເດືອນ 89.2%, ນຳພາລູກເຂົ້າຮ່ວມສັກຢາວັກຊີນເປັນປົກກະຕິຕາມການນັດໝາຍຂອງສຸກສາລາ 91.1%, ເຂົ້າຮ່ວມເປັນປົກກະຕິຕໍ່ກິດຈະກຳການສື່ສານເພື່ອປ່ຽນແປງພຶດຕິກຳ ແລະ ສັງຄົມດ້ານໂພຊະນາການດ້ານສຸຂະພາບ 90.0% ແລະ ເຂົ້າຮ່ວມກິດຈະກຳໂຄງການອື່ນ 75.9%, ໄດ້ຮັບເງິນຊ່ວຍເຫຼືອ 250,000 ກີບ 98.4% ແລະ ນຳໃຊ້ເງິນທີ່ໄດ້ຮັບການຊ່ວຍເຫຼືອຈາກໂຄງການ, ໃຊ້ຈ່າຍເຂົ້າໃນການຊື້ອາຫານ 80.3% ແລະ ເປັນຜູ້ທີ່ບໍ່ເຄີຍບໍ່ໄດ້ຮັບບັດການແຈ້ງເຕືອນກ່ຽວກັບການປະຕິບັດຕາມເງື່ອນໄຂຂອງໂຄງການໃນໄລຍະຜ່ານມາ ກວມເອົາ 90.0%.

ຈາກຜົນການຄົ້ນຄວ້າພົບວ່າ: ຄວາມຮູ້ ຄວາມເຂົ້າໃຈຂອງປະຊາຊົນທີ່ມີຕໍ່ດ້ານການຈັດຕັ້ງ, ຄວາມຮັບຜິດຊອບຈັດຕັ້ງປະຕິບັດ ແລະ ການປະສານງານ ແມ່ນປະຊາຊົນຍັງມີຄວາມຮູ້ຄວາມເຂົ້າໃຈໃນລະດັບປານກາງ ສະນັ້ນທາງຜູ້ຮັບຜິດຊອບໂຄງການ ແລະ ໜ່ວຍງານທີ່ກ່ຽວຂ້ອງຕ້ອງເອົາໃຈໃສ່ໃນການໃຫ້ຂໍ້ມູນຂ່າວສານໃຫ້ແກ່ປະຊາຊົນມີຄວາມຮັບຮູ້ ແລະ ເຂົ້າໃຈຫຼາຍຂຶ້ນກ່ຽວກັບວຽກງານການຈັດຕັ້ງ, ຄວາມຮັບຜິດຊອບຈັດຕັ້ງປະຕິບັດ ແລະ ການປະສານງານຂອງໂຄງການ ລພຊ ດ້ວຍຮູບການ: ຈັດກິດຈະກຳໂຄງສະນາ ເພື່ອອະທິບາຍເຖິງໜ່ວຍງານທີ່ຮັບວຽກໂດຍກົງ ຫຼື ຈັດການປະຊາສຳພັນປະກາດຂ່າວຜ່ານທາງໂຫລະໂຄງບ້ານຢ່າງເປັນປະຈຳ ແລະ ຕ້ອງໄດ້ມີການປະຊາສຳພັນໃຫ້ຫຼາຍຂຶ້ນ ເພື່ອແນໃສ່ເຮັດໃຫ້ປະຊາຊົນເຂົ້າໃຈຢ່າງເລິກເຊິ່ງເຖິງຄວາມສຳຄັນຂອງການເອົາລູກນ້ອຍມາຮັບວັກຊີ ແລະ ຢອດຢາ ຫຼາຍຂຶ້ນ ຫຼື ຈັດຮູບແບບກິດຈະກຳການຢອດຢາເຖິງເຮືອນເພື່ອຮັບປະກັນຄວາມທົ່ວເຖິງ ແລະ ມີປະສິດຜົນຂອງການໃຫ້ນ້ອຍໄດ້ຮັບວັກຊີ ແລະ ຢອດຢາຕາມຊ່ວງອາຍຸ.

7. ເອກະສານອ້າງອີງ

ພະແນກການເງິນແຂວງ ອຸດົມໄຊ. (2025). *ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການເພື່ອປັບປຸງວຽກງານໂພຊະນາການ 09 ເດືອນຕົ້ນປີ ແລະ ທິດທາງແຜນການ 03 ເດືອນທ້າຍປີ 2025 ຂອງແຂວງອຸດົມໄຊ.*

Bloom, S. J. (1975). *The Cognitive Domain*. New York: David McKay Co Inc.

Boontan, R. (2021). *The Relationship between Knowledge and Public Participation in the Local Development Plan Process (2018-2022) of Don Hua Lor Subdistrict Municipality, Mueang Chonburi District, Chonburi*. [Master]. Public Administration School of Management Science Sukhothai Thammathirat Open University.

Chanthamaly, S. (2024). *The Attitude of the Nan District's people towards the Irrigation Commercialization of*

the Smallholder Agriculture Project (PICSA). [Final Report]. Facculty of Economic and Tourism. Souphanouvong University.

Chandiphit, C., & Khoundavong, B. (2013). *Attitudes of the people of Xayaburi province towards the assistance of the Care project*. [Final Report]. Facculty of Economic and Tourism. Souphanouvong University.

Cochran, W. (1963). *Sampling Technique*. 2nd Edition, John Wiley and Sons Inc., New York.

Khonkla, P. (2020). *Public awareness and Attitude towards on Smiles for Us Project of deves insurance*. [Master]. Corporate communication Management, faculty of journalism and mass communication. Thammasat University.

Ministry of Agriculture and Forestry (MAF). (2024). *Agricultural Statistics Yearbook 2023*.

Limpimpronh, N. (2016). *Attitude and Behavior in corporate social responsibility participation of social department of electricity generating authority of Thailand officers*. [Master]. Corporate communication management, faculty of journalism and mass communication. Thammasat University.

Paisanjit, P. (2018). *Public participation in driving the development of the country according to thai NIYOM Yungyuen development project, Prachathipat Sub-district, Thanyaburi district, Pathum Thani province*. [Master]. Politics and government for executive faculty of political science Thammasat University.

Sayphouwan, S. (2024). *The Cognitive of People towards on the disaster Management funds In Xay District Oudomxai Province*. [Final Report]. Facculty of Economic and Tourism. Souphanouvong University.

Suriya, S. (2023). *The community participation for promoting community mental health system case study Soiruamsuk community Banhkhuntian subdistrict chomthong district Bangkok*. [Master]. Community Development, Faculty of social administration Thammasat University.

Siljiru, T. (2010). *Research and Statistical data analysis by SPSS and AMOS*. 11th Edition. ISBN: 9789741044108. Bangkok: business R and D ordinary partnership.

Xayyati, B., Anolac, V., & Phounnaly, P. (2026). Knowledge and understanding of Entrepreneurs' Tax Filing Service via the TaxRIS System in Xay district Municipality, Oudomxay Province. *Souphanouvong University Journal of Multidisciplinary Research and Development*, *12*[Fast Track], 241-250 https://doi.org/10.69692/SUJMRD12(Fast track)241.

Yamane, T. (1973). *Statistics: An introductory analysis (3 rd ed.)*. New York: Harper and Row.